ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ...138......../ ນຍ

ນະຄອນຫຼວງວຽງຈັນ, ວັນທີ 04 ພຶດສະພາ 2007

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02 /ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ໃບສະເໜີ ຂອງ ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 1154 /ຮສສ, ລົງວັນທີ 26 ມີນາ 2007;
- ອີງຕາມ ໃບສະເໜີ ຂອງ ລັດຖະມົນຕີ ປະຈຳ ສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຄະນະກຳມະການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 29 /ຫປຄ.ກພລ, ລົງວັນທີ 02 ເມສາ 2007.

### ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:

### ໝວດທີ I
### ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1. ທີ່ຕັ້ງ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຊຽນຫຍໍ້: "ຮ.ສ.ສ" ແມ່ນໂຄງປະກອບກົງຈັກຂອງລັດຖະບານ ຊຶ່ງຖືກຮັບຮອງເອົາໂດຍສະພາແຫ່ງຊາດ ຕາມການສະເໜີ ຂອງ ນາຍົກລັດຖະມົນຕີ.

**ມາດຕາ 2. ພາລະບົດບາດ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ລັດຖະບານ ໃນການຄຸ້ມຄອງລັດ ກ່ຽວກັບຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ໃນຂອບເຂດທົ່ວປະເທດ.

## ໝວດທີ II

## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

**3.1** ຈັດຕັ້ງປະຕິບັດ ແລະ ຫັນແນວທາງແຜນນະໂຍບາຍຂອງພັກ, ທິດທາງແຜນການ ຂອງ ລັດຖະບານໃຫ້ກາຍເປັນແຜນງານ, ແຜນການ, ໂຄງການ, ເປັນລະບຽບກົດໝາຍ ເພື່ອຄຸ້ມຄອງການຈັດຕັ້ງ ແລະ ເຄື່ອນໄຫວວຽກງານແຮງງານ ແລະ ສະຫວັດດີການສັງຄົມ;

**3.2** ຄົ້ນຄວ້າຮ່າງກົດໝາຍ ແລະ ລະບຽບການຕ່າງໆ ທີ່ແນໃສ່ພັດທະນາສີມືແຮງງານລາວ ໃຫ້ມີອາຊີບທີ່ດີ, ໄດ້ມາດຕະຖານສາກົນເພື່ອລະກ້າວ ແລະ ສົ່ງເສີມວຽກເຮັດງານທຳໃຫ້ຄົນລາວ, ຄຸ້ມຄອງການບໍລິການຈັດຫາງານພາຍໃນ ແລະ ຕ່າງປະເທດ;

**3.3** ຊີ້ນຳ, ກວດກາ, ຄຸ້ມຄອງການນຳໃຊ້ແຮງງານລາວ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍແຮງງານກຳນົດ;

**3.4** ປະສານສົມທົບໄປຍັງອົງການກ່ຽວຂ້ອງຂອງປະເທດຕ່າງໆ ເພື່ອຄຸ້ມຄອງແຮງງານລາວ ທີ່ເຮັດວຽກຢູ່ປະເທດນັ້ນ, ນັບທັງສົມທົບກັບສະຖານທູດ ຫຼື ສະຖານກົງສຸນ ສ.ປ.ປ. ລາວ ທີ່ຢູ່ຕ່າງປະເທດ;

**3.5** ຄົ້ນຄວ້າ, ຮ່າງລະບຽບການຕ່າງໆ ກ່ຽວກັບການຄຸ້ມຄອງ ແລະ ປະຕິບັດນະໂຍບາຍບັນເທົາທຸກ ແລະ ຊ່ວຍເຫຼືອເດັກກຳພ້າ-ກຳພອຍ, ຜູ້ອາຍຸສູງທີ່ປ່ຽວພອຍ ຂາດທີ່ເພິ່ງພາອາໄສ, ຄົນເປັນບ້າ-ເສຍຈິດ ທີ່ບໍ່ມີຜູ້ລ້ຽງດູເບິ່ງແຍງ; ຄົ້ນຄວ້າ, ອອກຂໍ້ຕົກລົງ, ລະບຽບການຕ່າງໆ ໃນການຈັດຕັ້ງປະຕິບັດນະໂຍບາຍການສົງເຄາະ ເພື່ອຊ່ວຍບັນເທົາທຸກ ໃຫ້ປະຊາຊົນຜູ້ປະສົບເຄາະຮ້າຍຈາກໄພທຳມະຊາດ ແລະ ໄພສັງຄົມອື່ນໆ;

**3.6** ຄຸ້ມຄອງ, ວາງແຜນ ແລະ ຊີ້ນຳ ການຈັດຕັ້ງປະຕິບັດວຽກງານໄພພິບັດຕ່າງໆ ໃນທົ່ວປະເທດຕາມຂອບເຂດສິດຄວາມຮັບຜິດຊອບ ຂອງ ກະຊວງ ຮ.ສ.ສ;

**3.7** ຄົ້ນຄວ້າຮ່າງກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານປະກັນສັງຄົມ; ຈັດຕັ້ງຊີ້ນຳ, ຄຸ້ມຄອງການປະຕິບັດລະບອບປະກັນສັງຄົມ ໃຫ້ຖືກຕ້ອງກັບນະໂຍບາຍຂອງພັກ ແລະ ລັດຖະບານວາງອອກ;

**3.8** ຄົ້ນຄວ້າຮ່າງນະໂຍບາຍ ແລະ ຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງພັກ, ລັດຖະບານວາງອອກ ແລະ ທິດທາງແຜນການ ຂອງ ກະຊວງ ຮ.ສ.ສ ໃນແຕ່ລະໄລຍະ ກ່ຽວກັບການຄຸ້ມຄອງພະນັກງານບຳນານ, ນັກຮົບເສຍອົງຄະ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ຜູ້ເສຍສະຫຼະຊີວິດ-ຄອບຄົວຜູ້ເສຍສະຫຼະຊີວິດເພື່ອຊາດ ທີ່ຂາດຜູ້ດູ ແລ; ຜູ້ທີ່ມີຄຸນງາມຄວາມດີຕໍ່ຊາດ, ຕໍ່ການປະຕິວັດ; ຜູ້ອາຍຸສູງ; ເດັກກຳພ້າ-ກຳພອຍ, ຜູ້ດ້ອຍໂອກາດ, ເດັກພິການ; ຕໍ່ຜູ້ເສຍອົງຄະຢູ່ບັນດາສູນເສຍອົງຄະ, ຜູ້ປ່ຽວພອຍ-ອານາຖາ ແລະ ຊີ້ນຳການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ໃຫ້ສອດຄ່ອງກັບສະພາບການຕົວຈິງ ໃນແຕ່ລະໄລຍະ;

**3.9** ຄົ້ນຄວ້າ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດມະຕິ, ຄຳສັ່ງ, ຂໍ້ຕົກລົງ, ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບການກວດກາ, ກວດການ ບັນດາອົງການຈັດຕັ້ງທີ່ຂຶ້ນກັບການຄຸ້ມຄອງ ຂອງ ກະຊວງ ຮ.ສ.ສ; ປະຕິບັດນະໂຍບາຍປະຢັດ, ຕ້ານການຟູມເຟືອຍ, ຕ້ານ ແລະ ສະກັດກັ້ນ ການສໍ້ລາດບັງຫຼວງ, ກິນສິນບົນ; ແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກໃຫ້ມີປະສິດທິຜົນ;

3.10 ຄົ້ນຄວ້າ, ກຳນົດລະບຽບການ ກ່ຽວກັບການກໍ່ສ້າງ ແລະ ຄຸ້ມຄອງປ່າຊ້າແຫ່ງຊາດ, ອະນຸສາວະລີນັກຮົບນິລະນາມ, ອະນຸສາວະລີນ້ຳໃຈສາມັກຄີສູ້ຮົບລາວ-ຫວຽດນາມ ໃນທົ່ວປະເທດ;

3.11 ສຶກສາອົບຮົມ, ບຳລຸງ, ກໍ່ສ້າງ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍ ຕໍ່ ພະນັກງານ-ລັດຖະກອນ ໃນຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ຢ່າງຖືກຕ້ອງຕາມລະບຽບກົດໝາຍ, ຕາມນະໂຍບາຍຂອງພັກ ແລະ ລັດຖະບານວາງອອກ;

3.12 ຄຸ້ມຄອງມະຫາພາກຕໍ່ບັນດາອົງການຈັດຕັ້ງທາງສັງຄົມ ທີ່ເຄື່ອນໄຫວຢູ່ໃນຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ; ຊຸກຍູ້ ແລະ ສ້າງຄວາມສະດວກ ໃຫ້ອົງການຈັດຕັ້ງຂອງລັດ, ເອກະຊົນ, ລວມໝູ່ໄດ້ປະກອບສ່ວນເຂົ້າໃນການພັດທະນາວຽກງານແຮງງານ ແລະ ສະຫວັດດີການສັງຄົມ;

3.13 ພົວພັນກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອ, ຮ່ວມມື, ສະໜັບສະໜູນ ຕໍ່ ວຽກງານແຮງງານ ແລະ ສະຫວັດດີການສັງຄົມ ບົນພື້ນຖານຖືກຕ້ອງ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;

3.14 ສ້າງແຜນການ, ແຜນງົບປະມານ ສະເໜີຕໍ່ລັດຖະບານ ເພື່ອສະເໜີຜ່ານສະພາແຫ່ງຊາດ ພິຈາລະນາອະນຸມັດ, ຄຸ້ມຄອງນຳໃຊ້ງົບປະມານຄ້ຳປະກັນສັງຄົມ ແລະ ກອງທຶນອື່ນໆ ຕາມລະບຽບກົດໝາຍກຳນົດ;

3.15 ຄຸ້ມຄອງ, ຊີ້ນຳ ແລະ ຊຸກຍູ້ການເຄື່ອນໄຫວວຽກງານ ຂອງ ຄະນະກຳມະການຕ່າງໆ ທີ່ພົວພັນເຖິງຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ;

3.16 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 4. **ຂອບເຂດສິດ**

4.1 ປັບປຸງ, ສ້າງຕັ້ງ ຫຼື ລົບລ້າງກົງຈັກການຈັດຕັ້ງ ແລະ ຕຳແໜ່ງງານ ທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນທີ່ເຫັນວ່າບໍ່ສອດຄ່ອງ;

4.2 ຄົ້ນຄວ້າ, ສະເໜີປັບປຸງ ຫຼື ສ້າງຮ່າງກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ, ດຳລັດ; ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4.3 ແຕ່ງຕັ້ງ, ບັນຈຸ, ສັບຊ້ອນ, ເລື່ອນຊັ້ນ-ຂັ້ນ, ຍ້ອງຍໍ ແລະ ປະຕິບັດວິໄນຕໍ່ລັດຖະກອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4.4 ພິຈາລະນາ, ອະນຸມັດຄຳຮ້ອງຂໍສ້າງຕັ້ງບໍລິສັດ, ສະມາຄົມ, ມູນນິທິຕ່າງໆ ທີ່ແນໃສ່ຮັບໃຊ້ວຽກງານແຮງງານ ແລະ ສະຫວັດດີການສັງຄົມ ທີ່ບໍ່ຂັດກັບແນວທາງນະໂຍບາຍ ແລະ ລະບຽບ ກົດໝາຍ ພ້ອມທັງຊີ້ນຳ, ຄຸ້ມຄອງບັນດາການຈັດຕັ້ງດັ່ງກ່າວ;

4.5 ສົມທົບກັບ ບັນດາຂະແໜງການ, ອົງການຈັດຕັ້ງຕ່າງໆ ໃນການພັດທະນາສີມືແຮງງານ, ການຈັດຫາງານ, ການສົ່ງແຮງງານລາວອອກໄປຕ່າງປະເທດ ແລະ ນຳເອົາແຮງງານຕ່າງປະເທດ ເຂົ້າມາ ສ.ປ.ປ. ລາວ ບົນພື້ນຖານລະບຽບກົດໝາຍ;

4.6 ໃຫ້ຄຳແນະນຳ ຕໍ່ ບັນດາຫົວໜ່ວຍທຸລະກິດ ໃນການປະຕິບັດກົດໝາຍແຮງງານ, ລະບຽບການຕ່າງໆ ທີ່ພົວພັນເຖິງແຮງງານ ແລະ ສາຍພົວພັນລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ;

4.7 ພົວພັນ, ຮ່ວມມື, ເຊັນສັນຍາ, ອານຸສັນຍາ, ບົດບັນທຶກຊ່ວຍຈຳ ກັບ ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ບົນພື້ນຖານໄດ້ອະນຸຍາດຈາກລັດຖະບານ, ນາຍົກລັດຖະມົນຕີ;

4.8 ກວດກາ-ກວດການ ບັນດາຫົວໜ່ວຍການຈັດຕັ້ງ ທີ່ຂຶ້ນກັບກະຊວງ ຮ.ສ.ສ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ບັນດາຫົວໜ່ວຍທຸລະກິດ, ວິສາຫະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານ ຢູ່ ສ.ປ.ປ. ລາວ ໃນການເຄົາລົບ ແລະ ປະຕິບັດຕາມແນວທາງ, ນະໂຍບາຍ ແລະ ລະບຽບກົດໝາຍ ຂອງ ສ.ປ.ປ. ລາວ ກ່ຽວກັບຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ. ພິຈາລະນາແກ້ໄຂ ຫຼື ສະເໜີອົງການທີ່ມີສິດອຳນາດແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກຂອງອົງການຈັດຕັ້ງ ຫຼື ປະຊາຊົນ ທີ່ພົວພັນກັບຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ,( ຍົກເວັ້ນຄຳຮ້ອງຟ້ອງ ແລະ ຄຳຮ້ອງທຸກ ກ່ຽວຂ້ອງກັບວຽກງານນັກຮົບເກົ່າ ).

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບບຸກຄະລາກອນ

5.1 ການນຳ ຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະກອບດ້ວຍ: ລັດຖະມົນຕີວ່າການ 01 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກປະທານປະເທດ ບົນພື້ນຖານການສະເໜີ ຂອງ ນາຍົກລັດຖະມົນຕີ ໂດຍຜ່ານການຮັບຮອງຈາກສະພາແຫ່ງຊາດ, ເປັນສະມາຊິກລັດຖະບານ, ມີຄວາມຮັບຜິດຊອບໃນການປະຕິບັດພາລະບົດບາດ, ສິດໜ້າທີ່ຂອງຕົນ ຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສ.ປ.ປ. ລາວ ກຳນົດ.

ລັດຖະມົນຕີວ່າການ ເປັນຫົວໜ້າກະຊວງ ຮ.ສ.ສ ມີຄວາມຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງ, ອຳນວຍຄວບຄຸມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານກ່ຽວກັບວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ຮັບຜິດຊອບໂດຍກົງຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນຂະແໜງການຂອງຕົນ ຕໍ່ ລັດຖະບານ ແລະ ນາຍົກລັດຖະມົນຕີ.

5.2 ການນຳ ຂອງ ກະຊວງ ຮ.ສ.ສ ຍັງປະກອບດ້ວຍ: ລັດຖະມົນຕີຊ່ວຍວ່າການ ຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກນາຍົກລັດຖະມົນຕີ ຕາມການສະເໜີ ຂອງ ລັດຖະມົນຕີວ່າການກະຊວງ ຮ.ສ.ສ ແລະ ຄະນະຈັດຕັ້ງສູນກາງພັກ. ລັດຖະມົນຕີຊ່ວຍວ່າການເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການ ແລະ ລົງເລິກຮັບຜິດຊອບກຸ່ມວຽກງານໃດໜຶ່ງ ຕາມການມອບໝາຍ ຂອງ ລັດຖະມົນຕີວ່າການກະຊວງ ຮ.ສ.ສ;

5.3 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຍັງປະກອບດ້ວຍ: ຫົວໜ້າ-ຮອງຫົວໜ້າຫ້ອງການ; ຫົວໜ້າ-ຮອງຫົວໜ້າກົມ; ຫົວໜ້າ-ຮອງຫົວໜ້າພະແນກ; ຫົວໜ້າ-ຮອງຫົວໜ້າກອງເລຂາຕ່າງໆ ຂອງ ຄະນະກຳມາທິການແຫ່ງຊາດ; ພະນັກງານວິຊາການ ແລະ ພະນັກງານບໍລິຫານຮັບໃຊ້ ຈຳນວນໜຶ່ງ ຊຶ່ງບັນຈຸເຂົ້າໃນຕຳແໜ່ງງານຕ່າງໆ;

5.4 ຢູ່ຂັ້ນທ້ອງຖິ່ນປະກອບມີ: ຫົວໜ້າ-ຮອງຫົວໜ້າ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນ; ຫົວໜ້າ-ຮອງຫົວໜ້າ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ ແລະ ພະນັກງານວິຊາການຈຳນວນໜຶ່ງ.

ມາດຕາ 6. ໂຄງປະກອບກົງຈັກ

6.1 ຂັ້ນສູນກາງ

1. ຫ້ອງການ;
2. ກົມ ຈັດຕັ້ງ ແລະ ພະນັກງານ;
3. ກົມ ກວດກາ;
4. ກົມ ຄຸ້ມຄອງແຮງງານ;
5. ກົມ ພັດທະນາສີມືແຮງງານ ແລະ ຈັດຫາງານ;
6. ກົມ ສັງຄົມສົງເຄາະ;
7. ກົມ ບຳນານ, ເສຍອົງຄະ ແລະ ພິການ;
8. ກົມ ປະກັນສັງຄົມ.

6.2 ຂັ້ນທ້ອງຖິ່ນ

– ພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນ;
– ຫ້ອງການ ແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ.

## ໝວດທີ IV
## ແບບແຜນວິທີເຮັດວຽກ

ມາດຕາ 7. ຫຼັກການ ແລະ ແບບແຜນການເຄື່ອນໄຫວ

7.1 ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ;

7.2 ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນ ກັບ ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນໆ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານແຮງງານ ແລະ ສະຫວັດດີການສັງຄົມ;

7.3 ເຮັດວຽກຢ່າງມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍຫາຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;

7.4 ປະຕິບັດລະບອບຮ່ວມປະຊຸມ ປະຈຳອາທິດ, ປະຈຳເດືອນ, ໄຕມາດ (ງວດ), ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອເກັບກຳສະພາບການຕ່າງໆ ແລ້ວສັງລວມ, ລາຍງານ ຕໍ່ ລັດຖະບານ, ນາຍົກລັດຖະມົນຕີ ຢ່າງເປັນປົກກະຕິ;

7.5 ປະຕິບັດລະບອບທັບລົງສູ່ຮາກຖານ ເພື່ອກະຕຸກ-ຊຸກຍູ້ ແລະ ສ້າງຂະບວນການຕ່າງໆ ດ້ານວຽກງານແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ປະກົດເປັນຈິງ ແລະ ຖອດຖອນບົດຮຽນ ຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ແລະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ມີງົບປະມານເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານວິຊາສະເພາະ ແລະ ວຽກງານທາງລັດຖະການ.

**ມາດຕາ 9. ກາປະທັບ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫ້ອງການ, ບັນດາກົມ; ພະແນກແຮງງານ ແລະ ສະຫວັດດີການສັງຄົມຂັ້ນແຂວງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ, ບັນດາສູນເສຍອົງຄະ ແລະ ອົງການຈັດຕັ້ງຕ່າງໆ ຂອງ ກະຊວງ ຮ.ສ.ສ ມີກາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຄົ້ນຄວ້າຜັນຂະຫຍາຍກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບການຈັດຕັ້ງຂອງ ຫ້ອງການ, ບັນດາກົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ແລະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ບົນພື້ນຖານການປະກອບຄຳເຫັນຂອງ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 52/ນຍ, ລົງວັນທີ 22 ມີນາ 2006.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ

ບົວສອນ ບຸບຜາວັນ